ສປປ ລາວ ໃຫ້ຄວາມສຳຄັນ ການຈັດຕັ້ງປະຕິບັດສົນທິສັນຍາຕ່າງໆ

*(ຂປລ): ລັດຖະບານ ແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ດຳເນີນນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ໂດຍໄດ້ເອົາໃຈໃສ່ໃນການຂະຫຍາຍ ສາຍພົວພັນ ແລະ ການຮ່ວມມືກັບປະເທດຕ່າງໆໃນໂລກ ໃນການປະຕິບັດນະໂຍບາຍຕ່າງປະເທດ ແລະ ການເຊື່ອມໂຍງທາງດ້ານເສດຖະກິດຢູ່ພາກພື້ນ ແລະ ໃນໂລກ ໂດຍຖືສຳຄັນໃນການເອົາໃຈໃສ່ຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ສາຍພົວພັນມິດ ຕະພາບ ແລະ ການຮ່ວມມື ກັບລັດພາຄີອື່ນຢ່າງຕັ້ງໜ້າ.

ທ່ານ ພົງສະຫວັດ ບຸບຜາ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ໄດ້ເນັ້ນບັນຫາດັ່ງກ່າວ ຢູ່ໃນກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ຢູ່ ສປປ ລາວ ໃນລະຫວ່າງວັນທີ 25-26 ມິນາ 2009 ຢູ່ທີ່ສູນຮ່ວມມືສາກົນ ແລະ ຝຶກອົບຮົມ (ຫຼັກ 5) ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ນາງ ໂຊນາມ ຢ່າງເຈີນຣານາ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳລາວ ແລະ ມີແຂກຖືກເຊີນທັງພາຍໃນ ແລະ ຕ່າງປະເທດ ລວມໄປເຖິງຊ່ຽວຊານຈາກກຳປູເຈຍ, ສປ ຈີນ, ໄທ ແລະ ສສ ຫວຽດນາມ ເຂົ້າຮ່ວມໃນໂອກາດນີ້ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ໄດ້ສັງເກດຕີລາຄາກ່ຽວກັບສະພາບການເຂົ້າຮ່ວມ ແລະ ການ ຈັດຕັ້ງປະຕິບັດສົນທິສັນຍາສາກົນ ຂອງ ສປປ ລາວ ໃນນາມເປັນລັດພາຄີລັດໜຶ່ງຂອງສົນທິສັນຍາສາກົນຈຳນວນຫລາຍສະບັບສົມຄວນ ໃນນີ້ລວມມີ: ສົນທິສັນຍາພະຫຸພາຄີ, ສົນທິສັນ ຍາລະດັບພາກພື້ນ, ສົນທິສັນຍາທະວິພາຄີ ຕະຫລອດໄລຍະເວລາ 33 ປີ

ຜ່ານມາ ສປປ ລາວ ໄດ້ລົງນາມໃຫ້ສັດຕະຍາບັນ ແລະ ເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນຫລາຍສະບັບເຊິ່ງສົນທິສັນຍາເຫຼົ່ານັ້ນນອນຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຂະແໜງການທີ່ກ່ຽວຂ້ອງ ທີ່ເປັນອົງການຫຼັກ ຫຼື ເປັນອົງການປະສານສົມທົບໃນການຈັດຕັ້ງປະຕິບັດ, ໄລຍະຜ່ານມາຫລາຍຂະແໜງໄດ້ເປັນເຈົ້າການຈັດຕັ້ງປະຕິບັດສົນທິສັນຍາ ທີ່ນອນຢູ່ໃນຂອບຄວາມຮັບຜິດຊອບຂອງຕົນ ໂດຍມີການສະເໜີສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳພາຍໃນ ພ້ອມທັງມີການຕິດຕາມ ແລະ ລາຍງານກ່ຽວກັບສົນທິສັນຍາທີ່ກ່ຽວຂ້ອງຢ່າງເປັນປົກກະຕິ. ເຖິງຢ່າງໃດກໍຕາມ ຜ່ານມາຍັງສັງເກດເຫັນວ່າມີສົນທິສັນຍາສາກົນຈຳນວນໜຶ່ງທີ່ ສປປ ລາວ ເປັນພາຄີແລ້ວ ແຕ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ແລະ ລາຍງານຢ່າງເຕັມສ່ວນ.

ໃນໂອກາດດຽວກັນ ທ່ານນາງ ໂຊນາມຢ່າງເຈີນຣານາ, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ລາວ ກ່າວວ່າ: ສປປ ລາວ ເປັນພາຄີສົນທິສັນຍາທະວິພາຄີຫລາຍກວ່າ 100 ສະບັບ, ສົນທິສັນຍາພະຫຸພາຄີຫລາຍກວ່າ 300 ສະບັບ, ສົນທິສັນຍາອາຊຽນ ແລະ ສັນຍາພາກພື້ນຫລາຍກວ່າ 100 ສະບັບ, ການເຂົ້າຮ່ວມອັນຕັ້ງໜ້າ ຂອງ ສປປ ລາວ ໃນສົນທິສັນຍາສາກົນ ແມ່ນຢືນຢັນອັນສຳຄັນຕໍ່ຄຳໝັ້ນສັນຍາຂອງລັດຖະບານລາວ ຕໍ່ຂະບວນການນິຕິກຳສາກົນ./.